ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 210 /ສສກ.14

ນະຄອນຫຼວງວຽງຈັນ, ວັນທີ 25 FEB 2014

## ແຈ້ງການແນະນຳ

ເຖິງ: ທົ່ວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ.

ເລື່ອງ: ການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດສົ່ງ ພະນັກງານ ແລະ ນັກຮຽນ ໄປຍົກລະດັບຕ່າງໆ ຢູ່ ສ.ສ. ຫວຽດນາມ ດ້ວຍແຫລ່ງທຶນຕ່າງໆ, ສະບັບເລກທີ 08/ນຍ, ລົງວັນທີ 20 ກຸມພາ 2014.

- ອີງຕາມ ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດສົ່ງພະນັກງານ ແລະ ນັກຮຽນ ໄປຍົກລະດັບຕ່າງໆຢູ່ ສ.ສ. ຫວຽດນາມ ດ້ວຍແຫລ່ງທຶນຕ່າງໆ, ສະບັບເລກທີ 08/ນຍ ລົງວັນທີ 20 ກຸມພາ 2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍລະບຽບການຄຸ້ມຄອງນັກສຶກສາລາວຢູ່ຕ່າງປະເທດ ສະບັບເລກທີ 8552/ສສກ.ກນ/13 ລົງວັນທີ 28/08/2013;
- ອີງຕາມແຜນຮ່ວມມື ປະຈຳປີ 2014 ລະຫວ່າງກະຊວງສຶກສາຂອງສອງປະເທດ.

ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກແຈ້ງການແນະນຳດັ່ງຕໍ່ໄປນີ້:

1. <u>ການປະຕິບັດທຶນການສຶກສາຂອງລັດຖະບານ ສສ. ຫວຽດນາມ</u>:

ໃຫ້ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ຮັບຜິດຊອບໂດຍກົງ ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ດຳເນີນການຄັດເລືອກ ແລະ ຈັດສົ່ງ ພະນັກງານ ແລະ ນັກຮຽນ ໄປສຶກສາຮ່ຳຮຽນ-ຍົກລະດັບດ້ວຍທຶນການສຶກສາຂອງລັດຖະບານ ສສ. ຫວຽດນາມ (ຕາມ ສາລະບານ ເລກ 2 ຂອງ ສັນຍາຮ່ວມມື ປີ 2014) ໃຫ້ຮັບປະກັນຄຸນນະພາບ ແລະ ທັນເວລາ.

2. <u>ການປະຕິບັດທຶນການສຶກສາໄລຍະຍາວ ທີ່ເປັນທຶນຮ່ວມມືລະຫວ່າງແຂວງ(ທ້ອງຖິ່ນ) ລາວ-ຫວຽດນາມ</u>:

2.1. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫລວງ ສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເອົາໃຈໃສ່ເປັນພິເສດ ໃນການສັບຊ້ອນທຶນການສຶກສາທີ່ໄດ້ຮັບການຊ່ວຍເຫລືອຈາກບັນດາແຂວງຂອງຫວຽດນາມ ໂດຍການຈັດແບ່ງ ຂະແໜງວິຊາຮຽນ ໃຫ້ສົມສ່ວນ, ໃຫ້ຖືກກັບຄວາມຕ້ອງການຕົວຈິງ ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະຍາວ ແລະ ແຜນກຳນົດສ້າງພະນັກງານ ຂອງ ທ້ອງຖິ່ນ (ຫລີກເວັ້ນການສັບຊ້ອນແບບຕາມໃຈຜູ້ຮຽນ), ຄັດເລືອກ ແລະ ຈັດສົ່ງໃຫ້ຖືກຕ້ອງ ຕາມເງື່ອນໄຂ ແລະ ຄວາມສາມາດຮອງຮັບ ຂອງຝ່າຍຫວຽດນາມ;

2.2. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫລວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢູ່ທ້ອງຖິ່ນຂອງຕົນ ຈັດຕັ້ງການຄັດເລືອກ ຫລື ສອບເສັງຕາມລະບຽບຫລັກການຢ່າງເຂັ້ມງວດ ແລ້ວສະເໜີຜົນການຄັດເລືອກໄປຍັງກົມກ່ຽວຂ້ອງ ຂອງ ກະຊວງສຶກສາທິການ ແລະ ກິລາ; ຜູ້ທີ່ຖືກຄັດເລືອກ ຕ້ອງມີຄະແນນສະເລັ່ຍເສັງຈົບມັດທະຍົມສຶກສາຕອນປາຍ ໄດ້ 6/10 (ຫລື 60%) ຂຶ້ນໄປ;

2.3. ກ່ອນອອກເດີນທາງໄປຮຽນ, ຜູ້ຮຽນຕ້ອງໄດ້ປະກອບເອກະສານຢູ່ກົມກິດຈະການນັກສຶກສາ ເພື່ອສະເໜີຂໍອະນຸມັດ ອອກຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ (ຖ້າບໍ່ມີຂໍ້ຕົກລົງດັ່ງກ່າວ, ກະຊວງສຶກສາ-ກໍ່ສ້າງ ຫວຽດນາມ ຈະບໍ່ຮັບຮູ້ ແລະ ຈະບໍ່ອອກໃບປະກາສະນີຍະບັດໃຫ້ຜູ້ຮຽນຈົບ). ຫລີກເວັ້ນບໍ່ໃຫ້ມີກໍລະນີໄປຮຽນກ່ອນ ແລ້ວຈຶ່ງສະເໜີຂໍອອກຂໍ້ຕົກລົງປ້ອນຫລັງ(ກໍລະນີທົ່ວໄປການຈັດສົ່ງຊ້າສຸດບໍ່ໃຫ້ກາຍວັນທີ່ 15 ພະຈິກ(11)ຂອງປີ).

3. <u>ກໍລະນີໄປຮຽນດ້ວຍທຶນສ່ວນຕົວ</u>:

3.1. ໃຫ້ພະແນກ ສຶກສາທິການ ແລະ ກິລາ ແຂວງ/ນະຄອນຫລວງ ເປັນເຈົ້າການ ຄົ້ນຄວ້າ ສົມທົບກັບສະຖາບັນການສຶກສາທີ່ກ່ຽວຂ້ອງຢູ່ທ້ອງຖິ່ນ ຂອງ ຫວຽດນາມ ເພື່ອຄັດເລືອກ ຕາມເງື່ອນໄຂ ຂອງ ຜູ້ຮຽນ ແລະ ຜູ້ປົກຄອງ ແລ້ວສະຫນີໄປຍັງ ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ.

3.2. ພະນັກງານ ແລະ ນັກຮຽນ ທີ່ຈະໄປຮຽນໄລຍະຍາວ ຢູ່ ສ.ສ. ຫວຽດນາມ ດ້ວຍທຶນສ່ວນຕົວ ຕ້ອງມີເງື່ອນໄຂພື້ນຖານ ດັ່ງລຸ່ມນີ້:

- ມີຄະແນນສະເລ່ຍ ເສັງຈົບມັດທະຍົມສຶກສາຕອນປາຍ ແຕ່ 6/10 (ຫລື 60%) ຂຶ້ນໄປ;
- ມີສຸກຂະພາບແຂງແຮງ ທາງກາຍ ແລະ ໃຈ, ມີຄຸນສົມບັດດີ (ບໍ່ພົວພັນສິ່ງເສບຕິດ ຫລື ຄະດີຕ່າງໆ) ໂດຍມີຫນັງສືຮັບປະກັນ ຈາກຜູ້ປົກຄອງ ຫລື ອົງການຈັດຕັ້ງທີ່ກ່ຽວຂ້ອງ;
- ມີເອກະສານຢັ້ງຢືນ ການຕອບຮັບ ຂອງ ສະຖາບັນການສຶກສາ ຢູ່ ຫວຽດນາມ;

3.3. (ໃຫ້ປະຕິບັດຄື ຂໍ້ 2.3.).

4. <u>ກໍລະນີໄປຮຽນດ້ວຍແຫລ່ງທຶນອື່ນໆ</u> (ທຶນໂຄງການ, ທຶນຂອງສະຖາບັນການສຶກສາ, ທຶນບໍລິສັດ, ທຶນມູນນິທິ ແລະ ອື່ນໆ):

4.1. ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງກັບຜູ້ຮຽນ ຄົ້ນຄວ້າຄັດເລືອກ ແລະ ປະຕິບັດຕາມເງື່ອນໄຂ ຂອງ ຜູ້ໃຫ້ທຶນຢ່າງຖືກຕ້ອງຄົບຖ້ວນ; ກໍລະນີຈຳເປັນ ໃຫ້ສົມທົບກັບ ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ.

4.2. (ໃຫ້ປະຕິບັດຄື ຂໍ້ 2.3.).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ໃນການປະຕິບັດຕົວຈິງ ຖ້າຫາກມີບັນຫາ ດ້ານວິທີການ, ດ້ານລະບຽບການ ຫລື ບັນຫາອື່ນໆ ໃຫ້ລາຍງານໄປຍັງກົມ ກ່ຽວຂ້ອງ ຂອງ ກະຊວງສຶກສາທິການ ແລະ ກິລາ ຊາບນຳ ເພື່ອຫາວິທີແກ້ໄຂໃຫ້ທັນເວລາ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ

<u>ບ່ອນສົ່ງ</u>:

- ພະແນກ ສສກ. ແຂວງ/ນະຄອນຫລວງ
- ສະຖາບັນການສຶກສາ ລະດັບອາຊີວະສຶກສາ ແລະ ມະຫາວິທະຍາໄລ ທັງ ພາກລັດ ແລະ ເອກະຊົນ ,
- ກົມວິຊາການທີ່ກ່ຽວຂ້ອງ
- ຫ້ອງການຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ(ເພື່ອຊາບ ແລະ ຕິດຕາມ)